Ottawa County Health Department

# ຄວາມຈິງຕໍ່ມວນຊົນ

## ພະຍາດເຍື່ອຫຸ້ມສະໝອງອັກເສບທາງວາຍຣັສ [VIRAL MENINGITIS]

**ພະຍາດເຍື່ອຫຸ້ມສະໝອງອັກເສບຄືຫຍັງ?**

ເປັນພະຍາດທີ່ເກີດມາຈາກເຊື້ອວາຍຣັສເຊິ່ງຕິດຢູ່ຕາມເຍື່ອຫຸ້ມສະໝອງ ແລະ ກະດູກສັນຫລັງ.

**ພະຍາດເຍື່ອຫຸ້ມສະໝອງອັກເສບແຜ່ລາມແນວໃດ?**

ພະຍາດເຍື່ອຫຸ້ມສະໝອງອັກເສບແຜ່ລາມໃນວິທີດັ່ງຕໍ່ໄປນີ້:

- ຂີ້ມູກຈາກດັງ ຫລື ຮູຄໍຈາກຄົນທີ່ມີເຊື້ອໂຣກນີ້.
- ການຈັບອາຈົມຂອງຄົນທີ່ເປັນພະຍາດ.

**ອາການບາງຢ່າງມີຫຍັງແດ່?**

ອາການອາດຈະຮ່ວມດ້ວຍ:

- ຄີງຮ້ອນ
- ປວດຫົວຢ່າງໜັກ
- ຄໍແຂງ
- ຕາຈະເຈັບເມື່ອຖືກແສງໄຟແຮງ
- ຢາກນອນ ຫລື ສັບສົນ
- ປຸ້ນທ້ອງປວດຮາກ ແລະ ຮາກ
- **ຖ້າເປັນແອນ້ອຍ** – ເປັນໄຂ້, ງໍແງ, ປຸກໃຫ້ຕື່ນຍາກ ຫລື ແອນ້ອຍບໍ່ຢາກກິນນົມ.

**ຈະກວດພົບພະຍາດເຍື່ອຫຸ້ມສະໝອງອັກເສບໄດ້ແນວໃດ?**

ໂດຍການກວດເບິ່ງນ້ຳໃນສັນຫລັງ.

**ຈະຮັກສາພະຍາດເຍື່ອຫຸ້ມສະໝອງອັກເສບດ້ວຍວິທີໃດ?**

ບໍ່ມີການຮັກສາຢ່າງເຈາະຈົງສຳລັບພະຍາດເຍື່ອຫຸ້ມສະໝອງອັກເສບ. ສ່ວນຫລາຍຄົນໄຂ້ຈະດີຄືນດ້ວຍຕົນເອງ. ແນະນຳໃຫ້ນອນພັກຜ່ອນ, ກິນນ້ຳຫລາຍໆ, ແລະ ກິນຢາສຳລັບການເປັນໄຂ້ ແລະ ປວດຫົວ.

**ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ພະຍາດເຍື່ອຫຸ້ມສະໝອງອັກເສບ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/000680.htm

12251 James St., Suite 400
Holland, MI 49424
ເລກໂທລະສັບ: (616) 396-5266
ເລກແຟັກ: (616) 393-5643
ແວບໄຊ: www.miOttawa.org